# SUN Bucks 2025

## Sun Bucks ແມ່ນຫຍັງ?

ໂຄງການ SUN Bucks ໃຫ້ເງິນຈຳນວນ 120 ໂດລາແກ່ຄອບຄົວສຳລັບເດັກນ້ອຍທີ່ມີສິດໄດ້ຮັບບັດໂອນເງິນຊ່ວຍເຫຼືອທາງອີເລັກໂທຣນິກ (EBT) ເພື່ອຊື້ເຄື່ອງຍ່ອຍໃນຊ່ວງລະດູຮ້ອນເມື່ອໂຮງຮຽນປິດ. ບັດ SUN Bucks ໄດ້ຮັບການຍອມຮັບໃນສະຖານທີ່ທີ່ຮັບບັດ CalFresh EBT ເຊັ່ນກັນ. **ການໄດ້ຮັບສິດປະໂຫຍດ SUN Bucks ບໍ່ມີຜົນກະທົບຕໍ່ສະຖານະຄົນເຂົ້າເມືອງຂອງຄອບຄົວທ່ານ.**

## ການລົງທະບຽນອັດຕະໂນມັດສຳລັບ SUN Bucks 2025

ເດັກນ້ອຍທີ່ໄດ້ຮັບສິດປະໂຫຍດ CalFresh, CalWORKs ແລະ/ຫຼື Medi-Cal ທີ່ມີລາຍໄດ້ທີ່ລະດັບ ຫຼື ຕ່ຳກວ່າ 185% ຂອງລະດັບຄວາມຍາກຈົນຂອງລັດຖະບານກາງ (FPL) ຈະໄດ້ຮັບສິດປະໂຫຍດ SUN Bucks ໂດຍອັດຕະໂນມັດ. ເດັກນ້ອຍທີ່ມີສິດໄດ້ຮັບອາຫານຟຣີ ຫຼືຫຼຸດລາຄາທີ່ໂຮງຮຽນບາງແຫ່ງ ອີງຕາມລາຍໄດ້ທີ່ກຳນົດຂອງຄອບຄົວ ຈະໄດ້ຮັບສິດປະໂຫຍດ SUN Bucks ໂດຍອັດຕະໂນມັດເຊັ່ນກັນ.

## ວິທີຂໍຮັບ SUN Bucks

ຖ້າເດັກນ້ອຍບໍ່ໄດ້ລົງທະບຽນໃນ SUN Bucks ໂດຍອັດຕະໂນມັດ ເຂົາເຈົ້າຕ້ອງສະໝັກຂໍຮັບສິດປະໂຫຍດທີ່ໂຮງຮຽນຂອງເຂົາເຈົ້າ ຫຼື ທີ່ຫ້ອງການບໍລິຫານຂອງໂຮງຮຽນ **ພາຍໃນວັນທີ 2 ກັນຍາ 2025** ເພື່ອເບິ່ງວ່າເຂົາເຈົ້າມີຄຸນສົມບັດອີງຕາມຈຳນວນສະມາຊິກໃນຄອບຄົວ ແລະລາຍໄດ້ ຫຼື ບໍ່.



- ເດັກນ້ອຍທີ່ບໍ່ໄດ້ຮັບຄວາມຊ່ວຍເຫຼືອຈາກພາກລັດ ແລະເຂົ້າຮຽນໃນໂຮງຮຽນ Community Eligibility Provision ຫຼື ໂຮງຮຽນ Provision 2 ຫຼື ນັກຮຽນທີ່ໄດ້ຮັບອາຫານກາງເວັນຈາກ California's Universal Meals Program **ຕ້ອງຍື່ນສະໝັກ.** ການໄດ້ຮັບອາຫານໃນໂຮງຮຽນຟຣີ **ບໍ່** ຮັບປະກັນວ່າເປັນການລົງທະບຽນໃນໂຄງການ SUN Bucks.
- ສະເພາະເດັກນ້ອຍທີ່ໄດ້ຮັບສິດປະໂຫຍດ Medi-Cal ເທົ່ານັ້ນຈະໄດ້ຮັບເງິນຊ່ວຍເຫຼືອ SUN Bucks ໂດຍອັດຕະໂນມັດ ຖ້າລາຍໄດ້ຂອງຄອບຄົວຢູ່ທີ່ລະດັບ ຫຼືຕ່ຳກວ່າ 185% ຂອງ FPL. ເຊິ່ງໝາຍຄວາມວ່າ ເດັກນ້ອຍບາງຄົນທີ່ໄດ້ຮັບສິດປະໂຫຍດ Medi-Cal ຈະບໍ່ໄດ້ຮັບເງິນຊ່ວຍເຫຼືອ SUN Bucks ໂດຍອັດຕະໂນມັດ. ຕົວຢ່າງທົ່ວໄປລວມເຖິງເດັກນ້ອຍທີ່ໄດ້ຮັບ ລາຍໄດ້ເສີມຈາກປະກັນສັງຄົມ ຫຼື ຄວາມຊ່ວຍເຫຼືອດ້ານການອຸປະກາລະບຸດ ເພາະວ່າຄອບຄົວເຫຼົ່ານີ້ໄດ້ຮັບສິດປະໂຫຍດ Medi-Cal ທີ່ບໍ່ໄດ້ຮັບການຢັ້ງຢືນ ທີ່ລະດັບ ຫຼືຕ່ຳກວ່າ 185% ຂອງ FPL.

## ການແຈ້ງເຕືອນຄວາມຈຳ:

- **ບັດ SUN Bucks ຈະໝົດອາຍຸ 122 ມື້ຫຼັງທີ່ມີການເຕີມເງິນໃສ່ໃນບັດ.** ຂໍສະໜັບສະໜູນໃຫ້ຄອບຄົວໃຊ້ເງິນ SUN Bucks ຂອງທ່ານກ່ອນໃຊ້ສິດປະໂຫຍດ CalFresh. ກວດເບິ່ງລາຍລະອຽດຍອດເງິນຄົງເຫຼືອຂອງທ່ານທີ່ www.ebtedge.com.
- **ອັບເດດຂໍ້ມູນການຕິດຕໍ່ຂອງທ່ານ** ກັບໂຮງຮຽນຂອງລູກຫຼານຂອງທ່ານ ຫຼື ຫ້ອງການບໍລິຫານຂອງໂຮງຮຽນ, ຫ້ອງການສັງຄົມສົງເຄາະຂອງຄາວຕີ້ທ້ອງຖິ່ນ ຂອງທ່ານ ຫຼືທີ່ BenefitsCal.com.
- **ລາຍງານບັນຫາບັດ SUN Bucks ໄປທີ່ສາຍດ່ວນ SUN Bucks Helpline ທີ່ເບີ (877) 328-9677.** ຄອບຄົວບໍ່ມີສິດໄດ້ຮັບບັດ SUN Bucks ໄດ້ຫຼາຍກວ່າໜຶ່ງໃບຕໍ່ເດັກນ້ອຍໜຶ່ງຄົນ ຫຼືໄດ້ຮັບບັດ SUN Bucks ຈາກຫຼາຍກວ່າໜຶ່ງລັດ.

## ຕ້ອງການຮຽນຮູ້ເພີ່ມເຕີມບໍ?

- ໄປທີ່ www.cdss.ca.gov/SUNBucks.
- ລອງເບິ່ງ CDSS YouTube SUN Bucks Playlist.
- ສະແກນລະຫັດຕອບກັບດ່ວນ (QR).

**ໂຄງການ SUN Bucks ໃນລັດຄາລິຟໍເນຍໄດ້ຮັບການສະໜັບສະໜູນເງິນທຶນຈາກໜ່ວຍງານບໍລິການອາຫານແລະໂພຊະນາການ (FNS) ກະຊວງກະສິກຳສະຫະລັດ ອາເມຣິກາ (USDA) ແລະນຳສະເໜີໃຫ້ແກ່ທ່ານໂດຍພະແນກສັງຄົມສົງເຄາະລັດຄາລິຟໍເນຍ (CDSS) ຮ່ວມກັບພະແນກສຶກສາທິການລັດຄາລິຟໍເນຍ (CDE).**

www.cdss.ca.gov/sunbucks | www.cde.ca.gov/ls/nu/sf | SUNBucks@dss.ca.gov.

USDA ເປັນຜູ້ໃຫ້ບໍລິການ, ນາຍຈ້າງ ແລະຜູ້ໃຫ້ກູ້ທີ່ໃຫ້ໂອກາດເທົ່າທຽມກັນ. ພຶດສະພາ 2025

ຖ້າຕ້ອງການຂໍ້ມູນເພີ່ມເຕີມ ໄປທີ່: www.fns.usda.gov/summer.